

● ໂຄງການສ້າງສູນວັດທະນະທຳເດັກ (ສ.ວ.ດ.)

ສູນວັດທະນະທຳເດັກ ແມ່ນສະຖານທີ່ໃຫ້ຄວາມສະດວກແກ່ເດັກນ້ອຍ ໃນການອ່ານແລະຮຽນຮີດຄອງປະເພນີ ແລະວັດທະນະທຳອັນຈີບງາມຂອງລາວເຮົາ ເຊັ່ນ: ການຟ້ອນພື້ນເມືອງ ດົນຕຣີພື້ນເມືອງ ແລະສິລະປະວັດທະນະທຳຂອງລາວເຮົາ ທີ່ບໍ່ສາມາດຊອກຫາຮຽນຕາມໂຮງຮຽນຕ່າງໆໄດ້. ສູນວັດທະນະທຳເດັກຍັງເປັນສະຖານທີ່ ສຳຄັນໃນການພັດທະນາເດັກນ້ອຍໃຫ້ມີຄວາມກ້າຫານ ໃນການສະແດງອອກ. ປັດຈຸດບັນ ALC ໄດ້ອຸດໜູນງົບປະມານ ເພື່ອບໍລິຫານ ສ.ວ.ດ. ໃນລະດັບແຂວງ 4ແຫ່ງ (ສ.ພ.ດ.ນະຄອນຫຼວງ, ສ.ວ.ດ.ບໍລິຄຳໄຊ, ໄຊຍະບູລີ ແລະຫຼວງພະບາງ) ແລະລະດັບເມືອງ ແລະບ້ານ ຄື: ບໍ່ແຕນ, ແກ່ນທ້າວ, ປາກລາຍ (ຂ.ໄຊຍະບູລີ), ເມືອງທ່າພະບາດ (ຂ.ບໍລິຄຳໄຊ), ເມືອງສີສັດຕະນາກ ແລະບ້ານ ໂນ້ນແສງຈັນ (ນະຄອນຫຼວງ)

● ສົ່ງເສີມທ້ອງຖິ່ນໃຫ້ເປັນເຈົ້າການ:

ພວກເຮົາຄິດວ່າ ໃນອະນາຄົດອັນໃກ້ນີ້ ແຕ່ລະທ້ອງຖິ່ນ ມີຄວາມສາມາດ ເຂົ້າມາມີສ່ວນຮ່ວມໃນໂຄງການທີ່ກ່າວມາຂ້າງເທິງນັ້ນ ພາຍໃຕ້ການຊ່ວຍເຫຼືອ ແລະສົ່ງເສີມຂອງພວກເຮົາ. ເພື່ອໃຫ້ບັນລຸເປົ້າໝາຍນີ້, ພວກເຮົາໄດ້ສົ່ງເສີມຂະເຈົ້າໃຫ້ມີສ່ວນຮ່ວມໃນການພັດທະນາການສຶກສາ ປູກຝັງສູນທອນທັດ ແລະຈັດພິມເຜີຍແຜ່ວັດທະນທຳອັນດີງາມໃນລາວເຮົາ ໂດຍມີການເຝິກອົບຮົມໃຫ້ແກ່ຄູ ແລະນັກຂຽນ ເພື່ອສົ່ງເສີມຄວາມກ້າວໜ້າຜ່ານການພັດທະນາທັດສະ ຄວາມຮູ້ໃນຫຼາຍໆດ້ານ ເຊັ່ນ ການຂຽນ ການແຕ້ມ ສີມືປະດິດ ແລະ ອື່ນໆ.



## ເຊີນທ່ານສະໜັບສະໜູນ ALC

● ດ້ວຍການຮ່ວມມືທາງວິຊາການ

ຖ້າໂຮງຮຽນໃດ, ອົງການຈັດຕັ້ງໃດ ຫຼື ບໍລິສັດຫ້າງຮ້ານໃດ ຫາກມີຄວາມປະສົງ ຢາກຊ່ວຍເຫຼືອ ສະໜັບສະໜູນກິດຈະກຳຕ່າງໆ ເຊັ່ນວ່າ ງານນິທັດສະການ, ການປະຊຸມດ້ານຮ່ວມມືສາກົນ ແລະງານສຳມະນາກ່ຽວກັບວຽກງານອາສາສະໝັກ ກໍຂໍໃຫ້ຕິດຕໍ່ພວກເຮົາໄດ້ ພວກເຮົາ ຄອຍຖ້າຮ່ວມມືກັບທ່ານທຸກເວລາ.

● ດ້ານບຸກຄະລາກອນ:

ພວກເຮົາຕ້ອງການ ບຸກຄະລາກອນ ນັກຊ່ຽວຊານເພື່ອຊ່ວຍກໍ່ສ້າງ ແລະພັດທະນາບຸກຄະລາກອນໃນລາວ ໃນຂົງເຂດວຽກງານນີ້; ພວກເຮົາຍັງຕ້ອງການຄວາມຮ່ວມມືຂອງຜູ້ຊ່ຽວຊານດ້ານປຶ້ມຮູບ, ລະຄອນເຈ້ຍ, ແຕ້ມຮູບ, ການສະແດງ, ການສອນສິລະປະ, ກິລາ, ກາຍະກຳ ແລະອື່ນໆ.

● ອົງການຂອງພວກເຮົາ:

ອົງການຂອງພວກເຮົາເປັນສະມາຄົມອາສາສະໜັກທີ່ປະກອບມີຜູ້ຊ່ວຍເຫຼືອຈາກຫຼາຍພາກສ່ວນ ເຊັ່ນ: ສ່ວນບຸກຄົນ, ອົງການຈັດຕັ້ງພາກລັດ, ມູນນິທິຕ່າງໆ ຫຼືຜູ້ທີ່ເຫັນດີນຳຈຸດປະສົງຂອງພວກເຮົາ.

ທ່ານສາມາດບໍລິຈາກເພື່ອສົມທົບທຶນ ເພື່ອ:

1. ຊຸກຍູ້ກິດຈະກຳ ຂອງ ສ.ວ.ດ. 400 ໂດລາ (1 ກິດຈະກຳ/ປີ)
2. ຈັດຕັ້ງ "ຫ້ອງຮັກອ່ານ" ໃຫ້ໂຮງຮຽນປະຖົມ ຫຼື ມ.ຕົ້ນ 1500 ໂດລາ (1 ຫ້ອງສະໝຸດ)
3. ໃນການຈັດພິມປຶ້ມ 1 ຫົວເລື່ອງ 3000 ໂດລາ (3000-5000 ຫົວ)

ກະລຸນາຕິດຕໍ່ລາຍລະອຽດທີ່ຫ້ອງການ ALC ຕາມທີ່ຢູ່ດ້ານໜ້າ

# ສະມາຄົມຮ່ວມນ້ຳໃຈ ກັບເດັກນ້ອຍລາວ



## Action with Lao Children

(ALC/Deknoy Lao)



**ພວກເຮົາໄດ້ພິມປຶ້ມແລ້ວ ເຖິງ 600,000 ເຫຼັ້ມ ລວມມີ 128 ຫົວເລື່ອງ**

079/2 ຖະໜົນສາມແສນໄທ, ບ້ານສີທອມ
ຕູ້ ປ.ນ 1518, ນະຄອນຫລວງວຽງຈັນ
ໂທລະສັບ/ ແຟັກ : 21 3449
e-mail: alclao@laopdr.com

ໂຕກຽວ: 6-29-12-303 Minamimagome, Otaku, Tokyo Japan 143-0025 ໂທຣ/ແຟກ: 813-3755-1603
ອີເມລ:deknoylao@yahoo.co.jp ເວັບໄຊ: http:/deknoylao.org





# ໜັງສື ພັດທະນາຄວາມສາມາດ ຂອງເດັກນ້ອຍໄດ້.

ໃນຕອນຕົ້ນຂອງການດຳເນີນໂຄງການຂອງພວກເຮົາ ຄື ໃນປີ 1982 ຢູ່ນະຄອນວຽງຈັນ ມີຫໍສະໝຸດແຫ່ງຊາດພຽງໜຶ່ງແຫ່ງ ແລະຮ້ານຂາຍປຶ້ມຮ້ານດຽວ ແຕ່ກໍບໍ່ມີປຶ້ມສຳລັບເດັກນ້ອຍເລີຍ. ນອກຈາກໃນໂຮງຮຽນ ແລະວັດວາແລ້ວ, ຕາມໝູ່ບ້ານ ມີໜັງສື ແລະຕຳລາໄວ້ອ່ານ ພຽງເລັກໜ້ອຍເທົ່ານັ້ນ ສະພາບດັ່ງກ່າວ ຍັງສືບເນື່ອງມາເຖິງປັດຈຸບັນ, ການຂາດແຄນປຶ້ມອ່ານຂອງເດັກນ້ອຍລາວ ເຮັດໃຫ້ພວກເຂົາບໍ່ມີໂອກາດໄດ້ອ່ານໜັງສື ໃນຊີວິດປະຈຳວັນຂອງພວກເຂົາ. ດ້ວຍເຫດນີ້ ເດັກນ້ອຍຈຶ່ງລືມການຂຽນໜັງສືທີ່ຕົນໄດ້ຮຽນມາ ໃນໂຮງຮຽນ ພວກເຂົາບໍ່ມີໂອກາດ ນຳໃຊ້ຄວາມຮູ້ທີ່ຕົນໄດ້ຮຽນມາ. ມີບາງຄົນຄິດວ່າ: " ພວກເຮົາສາມາດຢູ່ໄດ້ໂດຍບໍ່ມີປຶ້ມ. ການອ່ານ, ການຂຽນ ບໍ່ແມ່ນສິ່ງຈຳເປັນໃນຊີວິດຂອງເຮົາ "

## ທ່ານຄິດຄືພວກເຂົາ ຫຼື ບໍ່ ?







ຂ້າພະເຈົ້າໄດ້ພົບຍິງສາວຄົນໜຶ່ງ ທີ່ເຂົ້າຮ່ວມເຝິກວິຊາຊີບຕັດຫຍິບທີ່ຢູ່ສູນວິຊາຊີບ, ລາວບໍ່ສາມາດຂຽນສິ່ງທີ່ລາວກຳລັງຮຽນຢູ່ ໃນມື້ນັ້ນໄດ້, ຍ້ອນລາວລືມວິທີອ່ານ ແລະຂຽນໄປໝົດແລ້ວ. ການທີ່ຈະສ້າງເສດຖະກິດຕົວເອງໃຫ້ດີນັ້ນ, ຄົນເຮົາຕ້ອງພັດທະນາ ຄວາມຮູ້ເພື່ອໃຫ້ທັນກັບເຕັກໂນໂລຊີ ໃໝ່ໆ, ແຕ່ວ່າຄວາມຮູ້ຄວາມກ້າວໜ້າເຫຼົ່ານັ້ນ ມັນກໍຂຶ້ນກັບການອ່ານ ແລະການຂຽນ.

ເດັກນ້ອຍລາວ ຍັງມີໂອກາດອີກຫຼວງຫຼາຍ, ພວກເຮົາຢາກເຫັນພວກເຂົາມີຄວາມຮູ້ ຄວາມສາມາດ, ຮູ້ຈັກເລືອກ ສ້າງອະນາຄົດຂອງຕົນເອງ ແລະ ກ້າສະແດງຄວາມຮູ້ ຄວາມສາມາດຂອງຕົນອອກມາ. ຄວາມສາມາດເຫຼົ່ານັ້ນຈະມີໄດ້ ກໍຍ້ອນການອ່ານ.

ເດັກນ້ອຍເຫຼົ່ານັ້ນ ຕ້ອງການປຶ້ມອ່ານໃຫ້ໄດ້ຫຼາຍຂຶ້ນຕື່ມ. ພວກເຮົາຢາກສົ່ງເສີມຂະເຈົ້າ ໂດຍຈັດພິມປຶ້ມເປັນພາສາລາວໃຫ້ໄດ້ຫຼາຍ ເທົ່າທີ່ຈະຫຼາຍໄດ້.

*ປະທານສະມາຄົມ*
*ຈັນທະສອນ ອິນທະວົງ*

## ພວກເຮົາສະໜັບສະໜູນໃຫ້ເດັກນ້ອຍລາວ

- ເລືອກຈຸດໝາຍໃຫ້ຊີວິດ ແລະບັນລຸຜົນສຳເລັດ ດ້ວຍຕົວເຂົາເອງ.





# ວຽກງານຂອງພວກເຮົາ

- ໂຄງການພິມປຶ້ມ

ສະມາຄົມເຮົາໄດ້ພິມປຶ້ມສຳລັບເດັກນ້ອຍ ເຊັ່ນ ເປັນຮູບ, ນິທານພື້ນເມືອງ ເລື່ອງສັ້ນ ນະວະນິຍາຍ ວິທະຍາສາດ ໂລກອ້ອມຕົວ ເປັນພາສາລາວ ຂຽນໂດຍນັກປະພັນລາວເຮົາ ຫຼືແປຈາກວັນນະຄະດີຕ່າງປະເທດ ຕະຫຼອດຮອດພິມວັດຈະນານຸກົມປະກອບພາບ ສຳຫຼັບເດັກນ້ອຍ.

- ໂຄງການຕູ້ປຶ້ມ ແລະ ຖົງປຶ້ມ

ໂດຍຮ່ວມກັບຫໍສະໝຸດແຫ່ງຊາດ ໃນການດຳເນີນ " ໂຄງການສົ່ງເສີມການອ່ານ " ພວກເຮົາໄດ້ສົ່ງຕູ້ປຶ້ມ - ຖົງປຶ້ມເຊິ່ງມີປຶ້ມຈຳນວນກວ່າ 140ຫົວໃຫ້ໂຮງຮຽນປະຖົມ ແລະມັດທະຍົມຕົ້ນ ໃນປະເທດລາວ ມາຮອດປີ 2007 ນີ້ ໄດ້ 2600 ໂຮງຮຽນແລ້ວ.

- ໂຄງການຫໍສະໝຸດໂຮງຮຽນ " ຫ້ອງຮັກອ່ານ "

ພວກເຮົາໄດ້ສະໜອງປຶ້ມ ແລະອຸປະກອນ ເຊັ່ນ: ຕູ້ໃສ່ປຶ້ມ, ຖານໃສ່ປຶ້ມໃຫ້ແກ່ໂຮງຮຽນ ເພື່ອສົ່ງເສີມການອ່ານໃຫ້ແກ່ຊຸມຊົນທ້ອງຖິ່ນ ໂຮງຮຽນສ້າງຄູ ແລະວິທະຍາໄລຄູໃນທົ່ວປະເທດ ໃນຊື່ " ຫ້ອງຮັກອ່ານ " ໄດ້ກວ່າ 160 ໂຮງຮຽນແລ້ວ ພ້ອມນີ້ ຍັງແຈກຢາຍປຶ້ມຈຳນວນໜຶ່ງ ໃຫ້ໂຮງຮຽນ ທີ່ສະເໜີຂໍມາແຕ່ລະປີ ແມ່ນສະໜອງໃຫ້ກວ່າ 150ໂຮງຮຽນໃນທົ່ວປະເທດ.

- ເພື່ອຊ່ວຍໃຫ້ເດັກນ້ອຍລາວມີສິ່ງແວດລ້ອມທີ່ດີ ເພື່ອການອ່ານ.